ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 2838/ທຄຕລ 2023
ນະຄອນຫຼວງວຽງຈັນ, ວັນທີ: 31 JUL 2023

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ໃນນະຄອນຫຼວງວຽງຈັນ.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຄື່ອງໄອທີ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີຊາບວ່າ ທຄຕລ ມີຄວາມຕ້ອງການ ອຸປະກອນໄອທີ, ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

## I. ອຸປະກອນ Switch 24 Ports ຈຳນວນ 12 ຊຸດ (ຍີ່ຫໍ້ເປົ້າໝາຍ Huawei, Cisco).

| ລ/ດ | ລາຍລະອຽດຄວາມຕ້ອງການ | |
|---|---|---|
| **1** | **Switch Interface** | |
| **1.1** | 10/100/1000 Ethernet ports, | **24 Ports** |
| **1.2** | 1G SFP uplinks | **4 Ports** |
| **2** | **Switch Uplink** | |
| **2.1** | Number of Uplink Ports | **4 Ports** |
| **3** | **Throughput** | |
| **3.1** | Switching Capacity | **>= 50 Gbps** |
| **3.2** | Forwarding Rate | **>= 40 Mpps** |
| **4** | **Power Supply** | |
| **5.1** | AC Power Supply | **1 or 2** |
| **5** | **Software License** | |
| **5.1** | Switch Fundamentals | **Supported** |

## II. ອຸປະກອນ Switch 48 Ports ຈຳນວນ 04 ຊຸດ(ຍີ່ຫໍ້ເປົ້າໝາຍ Huawei, Cisco).

| ລ.ດ | ລາຍລະອຽດຄວາມຕ້ອງການ | |
|---|---|---|
| **1** | **Switch Interface** | |
| **1.1** | 10/100/1000 Ethernet ports, | **48 Ports** |
| **1.2** | 1G SFP uplinks | **4 Ports** |
| **2** | **Switch Uplink** | |
| **2.1** | Number of Uplink Ports | **4 Ports** |
| **3** | **Throughput** | |
| **3.1** | Switching Capacity | **>= 100 Gbps** |
| **3.2** | Forwarding Rate | **>= 70 Mpps** |
| **4** | **Power Supply** | |
| **5.1** | AC Power Supply | **1 or 2** |
| **5** | **Software License** | |
| **5.1** | Switch Fundamentals | **Supported** |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

**III. ອຸປະກອນ Router ສຳລັບໜ່ວຍບໍລິການ-ງານອອກບູດ ຈຳນວນ 27 ຊຸດ (ຍີ່ຫໍ້ເປົ້າໝາຍ Huawei, Cisco).**

| ລ.ດ | ລາຍລະອຽດຄວາມຕ້ອງການ | |
|---|---|---|
| **1** | **Interface** | |
| **1.1** | WAN Ports | **>= 2 Ports** |
| **1.2** | LAN Ports | **>= 4 Ports** |
| **2** | **Memory** | 2 GB |
| **3** | **Throughput** | |
| **3.1** | **Forwarding Performance** | >= 1 Gbit/s |
| **4** | **Power Supply** | |
| **5.1** | AC Power Supply | **1 or 2** |
| **5** | **Software License** | |
| **5.1** | Basic & Advance Security feature | **Included** |

**IV. ອຸປະກອນ Firewall ສຳລັບອິນເຕີເນັດ ຂອງສາຂາ ແລະ ໜ່ວຍບໍລິການ ຈຳນວນ 09 ຊຸດ (ຍີ່ຫໍ້ເປົ້າໝາຍ Huawei, Fortinet).**

| ລ.ດ | ລາຍລະອຽດຄວາມຕ້ອງການ | ສະເປັກທີ່ຕ້ອງການ | ໝາຍເຫດ |
|---|---|---|---|
| 1 | **Throughput** | | |
| 1.1 | Firewall Throughput (Application Throughput) | >= 6 G | |
| 1.2 | IPS Throughput | >= 1.4 G | |
| 1.3 | NGFW Throughput | >= 1 G | |
| 1.4 | Threat protection Throughput | >= 700 Mbps | |
| 1.5 | IPSEC Throughput | >= 6G | |
| 2 | **Sessions** | | |
| 2.1 | New Sessions | >= 35,000 | |
| 2.2 | Concurrent session. | >= 700,000 | |
| 3 | **Hardware** | | |
| 3.1 | Interface WAN | >= 2 Port | |
| 3.2 | Interface GE RJ45 | >= 4 Port | |
| 3.3 | Console RJ45 | >= 1 Port | |
| 4 | **Software** | | |
| 4.1 | Anti-Malware | supported | Included |
| 4.2 | Advance Malware detection | supported | Included |
| 4.3 | IPS | supported | Included |
| 4.4 | Application Control | supported | Included |
| 4.5 | Web Filtering | supported | Included |
| 4.6 | SSL VPN | supported | Included |
| 5 | **MA & Subscription, 24x7 support** | 3 Years | Included |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ທີ່ມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**
- **<u>ເອກະສານ ຊອງທີ 1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021 ຫຼື 2022 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ).
2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 11/08/2023 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ **E-mail: <u>procurement@bcel.com.la</u> ແລະ <u>inspect-it@bcel.com.la</u>** ເພື່ອໃຫ້ສູນໄອທີໄດ້ກວດສະເປັກ.

- **<u>ເອກະສານ ຊອງທີ 2:</u> (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການໃຫ້ລະອຽດ ແລະ ຕ້ອງລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 17/09/2023)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນພະຫັດ **ວັນທີ 17/08/2023 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

- **<u>ໝາຍເຫດ:</u>**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.

- **ການຊຳລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ 1:** ຊຳລະ 90% ຂອງມູນຄ່າ ພາຍໃນ 25 ວັນ ລັດຖະການ ພາຍຫຼັງໄດ້ຮັບເຄື່ອງ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ.
- **ງວດທີ 2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຮອງ ຜູ້ອຳນວຍການ

ແຫ່ງ ສປປ ລາວ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນຫຼວງວຽງຈັນ ທລວ

ນັນທະລາດ ແກ້ວປະເສີດ

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ ທີ່ເຄີຍບໍລິການໃຫ້ແກ່ ທະນາຄານ | ໜ້າວຽກ | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015 ) | .... ປີ | (ໃຫ້ລະບຸ) | (ຕາມ ທຄຕລ ກຳນົດ) | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະແຈ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: